ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ອີທີແອລ ຈຳກັດ

ສະຫະກອນ ອອມຊັບ-ສິນເຊື່ອ ອທອ

ເລກທີ 0148/ສອສ.ອທອ

ວັນທີ 18/12/19

# ແຈ້ງການ

ເຖິງ: ບັນດາພະແນກ, ສາຂາ ອທອ ປະຈຳແຂວງ ແລະ ສະມາຊິກ ສອສ.

ເລື່ອງ: ການໃຫ້ກູ້ຢືມ, ການປ່ຽນແປງຮຸ້ນງວດ 12 ເດືອນປີ 2020

- ອີງຕາມກົດລະບຽບພາຍໃນຂອງສະຫະກອນ ອອມຊັບ-ສິນເຊື່ອ ອທອ ສະບັບເລກທີ: 005/ສອສ, ລົງວັນທີ 28/01/2013.
- ອີງຕາມບົດບັນທຶກກອງປະຊຸມຂອງຄະນະບໍລິຫານງານ ສອສ ລົງວັນທີ 17/12/2019.

ຜູ້ອຳນວຍການ ສະຫະກອນອອມຊັບ-ສິນເຊື່ອ ອທອ ຂໍຖືເປັນກຽດແຈ້ງມາຍັງບັນດາພະແນກ, ສາຂາ ອທອ ປະຈຳແຂວງເພື່ອແຈ້ງຕໍ່ສະມາຊິກ ສອສ ທຸກທ່ານຊາບ ການເພີ້ມ, ຫຼຸດ, ຖອນຮຸ້ນ ໃນງວດ 12 ເດືອນ ປີ 2020 ດັ່ງນີ້ :

1. ການກູ້ຢືມ:

ສະຫະກອນອອມຊັບ-ສິນເຊື່ອ ອທອ ຈະຂໍຢຸດການປ່ອຍກູ້ຊົ່ວຄາວເພື່ອປິດບັນຊີ ປີ 2019 ແຕ່ ວັນທີ 25-31/12/2019 ເພື່ອເອກະພາບດ້ານຕົວເລກທຸລະກິດ ແລະ ຈະເປີດ ການປ່ອຍກູ້ເປັນປົກກະຕິ ໃນວັນທີ 02/01/2020 ເປັນຕົ້ນໄປ.

2. ການປ່ຽນແປງຮຸ້ນ:

2.1 ເປີດຮັບສະໝັກສະມາຊິກ ສອສ ໃໝ່ ທີ່ມີເງື່ອນໄຂດັ່ງນີ້: ພະນັກງານຖາວອນ, ພະນັກງານທົດລອງວຽກ.

2.2 ການຖອກຮຸ້ນ: ຕໍ່າສຸດ 1 ຮຸ້ນ = 10,000 ກີບ/ຄົນ/ເດືອນ ແລະ ສູງສຸດ 50 ຮຸ້ນ = 500,000 ກີບ/ຄົນ/ເດືອນ.

2.3 ການຖອນຮຸ້ນ: ໃຫ້ສະມາຊິກຮັກສາຮຸ້ນໄວ້ນຳ ສອສ ບໍ່ໃຫ້ຫຼຸດ 10 ຮຸ້ນ =100,000 ກີບ.

2.4 ສະມາຊິກຜູ້ທີ່ມີຈຸດປະສົງຖອນຮຸ້ນ ຫຼື ເພີ້ມ/ຫຼຸດ ໃຫ້ປະກອບແບບຟອມ ສົ່ງໃຫ້ ທ່ານ ນ. ທ່ານ ນ. ລຳພອນ ແກ້ວແກ່ນຈັນ ຂາເຂົ້າ-ຂາອອກ ຂອງ ສອສ ຜ່ານ Email: etlscc2018@gmail.com, ເບີໂທ 020 22210057.

2.5 ກຳນົດເວລາຮັບຟອມ ເລີ້ມແຕ່ ວັນທີ 18/12/2019 - 27/12/2019, ສະມາຊິກ ສອສ ສາມາດກວດຮຸ້ນສະສົມໄດ້ທີ່ທາງ Website: scc.etllao.com

2.6 ກໍລະນີພະນັກງານຂອງທ່ານທາກອອກໄປປະຕິບັດວຽກງານຢູ່ຕ່າງແຂວງໃນໄລຍະປະກາດການເພີ້ມ/ຫຼຸດ ແລະ ສະໝັກໃໝ່ ແມ່ນໃຫ້ທ່ານພົວພັນຫາສະມາຊິກຂອງທ່ານໃຫ້ປະກອບແບບຟອມໃຫ້ທັນເວລາດັ່ງກ່າວ. ຖ້າຊັກຊ້າຖືວ່າສະລະສິດ.

2.7 ຄ່າທຳນຽມ ປ່ຽນແປງຮຸ້ນ 5,000 ກີບ/ສະບັບ.

2.8 ຄ່າສະໝັກສະມາຊິກ ສອສ ໃໝ່ແມ່ນ 10,000 ກີບ/ສະບັບ

3. ການຈ່າຍເງິນປັນຜົນງວດ 12 ເດືອນປີ 2019 ແລະ ເງິນຖອນຮຸ້ນ ສອສ ຈະແຈ້ງລາຍລະອຽດຕື່ມຕາມພາຍຫຼັງ.

4. <u>ວິທີຈັດຕັ້ງປະຕິບັດ:</u>

1. ການໂອນເງິນຖອນຮຸ້ນ, ຫລຸດຮຸ້ນ ຈະປະຕິບັດຕາມເລກບັນຊີ ທະນາຄານຂອງສະມາຊິກທີ່ໄດ້ແຈ້ງໃຫ້ ສອສ ຄື: ນະຄອນ ຫຼວງວຽງຈັນ, ສາຂາແຂວງແມ່ນໂອນຜ່ານເລກບັນຊີ ທະນາຄານ ພັດທະນາລາວ ຫຼື ການຄ້າຕ່າງປະເທດ ຫຼື ລາວຫວຽດ. ຫຼີກເວັ້ນການໂອນເຂົ້າບັນຊີຂອງຜູ້ອື່ນ ແລະ ບັນຊີຂອງທະນາຄານ ພົງສະຫວັນ ເພາະຈະໄດ້ເສຍຄ່າໂອນແຕ່ລະຄັ້ງ.
2. ສະມາຊິກສາມາດ ກວດເຊັກເລກບັນຊີຕົນເອງໄດ້ ທີ່ເວັບໄຊ: scc.etllao.com, ກໍລະນີທີ່ຕ້ອງການປ່ຽນແປງເລກບັນຊີແມ່ນໃຫ້ ພົວພັນ ທ່ານ ພອນພະຈັນ ບຸນທະລີ, ໂທ: 020 28889828.
2. ສໍາລັບ ສະມາຊິກໃໝ່ ໃຫ້ສົ່ງເລກບັນຊີທະນາຄານທີ່ອອກຊື່ຂອງຜູ້ກ່ຽວຂັດຕິດມາດ້ວຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ຜູ້ອໍານວຍການ ສອສ

ບໍລິສັດ ອີທີແອລ ມະຫາຊົນ
ສະຫະກອນອອມຊັບ-ສິນເຊື່ອ

ວັດທະນາ ວົງເຫວັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*******************

ສະຫະກອນອອມຊັບ-ສິນເຊື່ອ
ບໍລິສັດ ອີທີແອລ ຈຳກັດ

ຂາເຂົ້າ ເລກທີ:........../ສອສ
ວັນທີ:......................

# ໃບສະເໜີ

ຮຽນ: ທ່ານຄະນະອຳນວຍການ ສະຫະກອນອອມຊັບ-ສິນເຊື່ອ ອທອ

ເລື່ອງ: ຂໍປ່ຽນແປງຈຳນວນຮຸ້ນ ຂອງສະມາຊິກ ສອສ.

- ອີງຕາມກົດລະບຽບ ຂອງສະຫະກອນອອມຊັບ-ສິນເຊື່ອ ບໍລິສັດ ອີທີແອລ ມະຫາຊົນ.
- ອີງຕາມເງື່ອນໄຂຕົວຈິງ ແລະ ຄວາມສະໝັກໃຈຂອງ ສະມາຊິກ ສອສ.

ຂ້າພະເຈົ້າຊື່:.......................................ລະຫັດພະນັກງານ................(ອທອ)

ສັງກັດຢູ່ພາກສ່ວນ:................................. ພະແນກ/ແຂວງ:......................................

ປະຈຸບັນມີຮຸ້ນສະສົມລວມຮອດເດືອນ: 12/2019 ຈຳນວນ:...............ຮຸ້ນ,ເປັນເງິນ:.....................

.........................................................................................................

ມີຈຸດປະສົງຂໍປ່ຽນແປງຮຸ້ນ ຂອງຕົນເອງປະຈຳປີ: 2020 ດັ່ງລຸ່ມນີ້:

☐ ຂໍເຂົ້າຮຸ້ນຕໍ່ເດືອນ:............ຮຸ້ນ ເປັນເງິນ:.................................................

☐ ຂໍຖອນຮຸ້ນສະສົມ:............ຮຸ້ນ ເປັນເງິນ :.................................................

**ໝາຍເຫດ:** ການຖອນຮຸ້ນສະສົມຕ້ອງຍັງເຫຼືອ 10 ຮຸ້ນ ຫຼື 100.000 ກີບ, ຄ່າແບບຟອມ 5.000 ກີບ

ເຫດຜົນຂອງການປ່ຽນແປງຮຸ້ນ:.....................................................................

.........................................................................................................

ຫວັງວ່າ ທ່ານຈະພິຈາລະນາຕາມຄວາມເໝາະສົມດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ

| | **ຜູ້ສະເໜີ** | **ຢັ້ງຢືນຈາກພະແນກ/ສາຂາ** | **ຄະນະອຳນວຍການ ສອສ** |
|---|---|---|---|
| ຄຳເຫັນ | | | |
| ລາຍເຊັນ:<br>ຊື່ແຈ້ງ: | | | |
| ວັນທີ: | | | |

ທີ່ຢູ່ສຳນັກງານໃຫຍ່ ຖະໜົນສາຍລົມ 01000 , ຕູ້ໄປສະນີ 7953 , ນະຄອນຫຼວງວຽງຈັນ, ສປປລ. ໂທລະສັບ 021 260031 Web: scc.etllao.com